ບໍລິສັດ ລາວອາໂກຣເທັກ ມະຫາຊົນ

pwc

ເອກະສານລາຍງານການເງິນ
(ທົບທວນຄືນ)

ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2019

www.pwc.com/la

ສາລະບານ **ໜ້າ**

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ	1
ໃບລາຍງານຖານະການເງິນ	2
ໃບລາຍງານຜົນໄດ້ຮັບ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	4
ໃບລາຍງານກະແສເງິນສົດ	5-6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້	7 - 13

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມີຖຸນາ 2019 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນປະຈຳປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານ ການທົບທວນຄືນ ຂອງພວກເຮົາ.

ຂອບເຂດ ການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນ ໂດຍຜູ້ກວດສອບ ອິດສະຫຼະ", ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມ ບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດສອບສາກົນ ເພາະສະນັ້ນການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກເຮົາໄດ້, ດັ່ງນັ້ນ ພວກເຮົາຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫລຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ, ບໍ່ມີຫຍັງທີ່ເປັນສາລະສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນ ດັ່ງກ່າວໄດ້ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍອໍເຕີເຮົ້າກຸບເປີ ສ (ລາວ) ຈຳກັດ ຜູ້ດຽວ

ບໍລິສັດ
ພຣາຍສ໌ເຕີເຮົ້າສຸບເປີ ສ (ລາວ)
ຈຳກັດຜູ້ດຽວ
PricewaterhouseCoopers(Lao)
Sole Company Limited

ທ່ານ ອາພິສິດ ທ່ຽງຕິງພິນໂຍ
ຜູ້ຖືຮຸ້ນ
ນະຄອນຫຼວງວຽງຈັນ ສປປ ລາວ
ວັນທີ: 27 ສິງຫາ 2019

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຖານະການເງິນ
ສິ້ນສຸດ ວັນທີ 30 ມິຖຸນາ 2019

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2019 ກີບ	ກວດສອບ 31 ທັນວາ 2018 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		4.309.728.160	4.823.430.665
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		12.295.941.752	16.577.627.158
ເຄື່ອງໃນສາງ, ສຸດທິ		1.707.589.362	865.481.946
ວັດສະດຸສະໜອງ, ສຸດທິ		5.045.911.926	906.316.624
ຄ່າເຍື່ອນຊໍາລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ		2.455.812.958	1.999.044.052
ຊັບສິນໝຸນວຽນອື່ນໆ		747.426.509	1.794.965.888
ລວມຊັບສິນໝຸນວຽນ		**26.562.410.667**	**26.966.866.333**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	4	23.052.136.513	20.280.020.977
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	5	22.647.548.173	22.507.458.490
ຊັບສິນບໍ່ໝຸນວຽນອື່ນໆ		209.229.563	-
ລວມຊັບສິນບໍ່ໝຸນວຽນ		**45.908.914.249**	**42.787.479.467**
ລວມຊັບສິນ		**72.471.324.916**	**69.754.345.800**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		8.511.078.747	9.218.844.391
ເງິນກູ້ຢືມໄລຍະສັ້ນ	6	2.043.397.181	426.674.639
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	7	570.347.823	-
ໜີ້ສິນໝຸນວຽນອື່ນໆ		592.362.854	367.107.838
ລວມໜີ້ສິນໝຸນວຽນ		**11.717.186.605**	**10.012.626.868**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງຈາກການເຊົ່າຊື້	7	1.663.515.034	-
ລວມໜີ້ສິນບໍ່ໝຸນວຽນ		**1.663.515.034**	**-**
ລວມໜີ້ສິນ		**13.380.701.639**	**10.012.626.868**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50.000.000.000	50.000.000.000
ສ່ວນເພີ່ມທຶນ		3.269.466.406	3.269.466.406
ກໍາໄລສະສົມ		4.933.660.458	5.584.756.113
ຄັງສະສົມຕາມລະບຽບການ		887.496.413	887.496.413
ກໍາໄລສະສົມລໍຖ້າແບ່ງປັນ		-	-
ລວມທຶນເຈົ້າຂອງ		**59.090.623.277**	**59.741.718.932**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**72.471.324.916**	**69.754.345.800**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອໍານວຍການ
ວັນທີ: 27 ສິງຫາ 2019

ທ່ານ ວັນສະໜຸມ ສີສົມຄໍາມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 27 ສິງຫາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 13 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2019

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2019 ກີບ	ທີ່ບທວນຄືນ 30 ມິຖຸນາ 2018 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ		35.354.426.024	23.667.068.880
ຕົ້ນທຶນໃນການຂາຍ ແລະ ການບໍລິການ		(31.231.387.436)	(19.731.337.912)
ກຳໄລ ຂັ້ນຕົ້ນ		**4.123.038.588**	**3.935.730.968**
ລາຍຈ່າຍການຂາຍ ແລະ ບໍລິຫານ		(3.632.175.324)	(3.255:809.230)
ລາຍຮັບອື່ນໆ		106.074.658	54.798.327
ຂາດທຶນຈາກອັດຕາແລກປ່ຽນ		(1.158.762.333)	(104.484.617)
ກຳໄລ/ຂາດທຶນຈາກການດຳເນີນງານ		**(561.824.411)**	**630.235.448**
ລາຍຈ່າຍທາງການເງິນ		(53.174.387)	-
ກຳໄລ/ຂາດທຶນກ່ອນຫັກອາກອນກຳໄລ		**(614.998.798)**	**630.235.448**
ອາກອນກຳໄລ	8	(36.096.857)	(153.362.289)
ກຳໄລ/ຂາດທຶນສຸດທິສຳລັບງວດ		**(651.095.655)**	**476.873.159**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	9	(7)	9

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 27 ສິງຫາ 2019

ທ່ານ ວັນສະເຫຼີມ ສີສົມຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 27 ສິງຫາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 13 ແມ່ນເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2019

	ທຶນຈົດທະບຽນ	ສ່ວນເພີ່ມທຶນ	ກຳໄລສະສົມ		ລວມ
			ຄັງສະສົມຕາມລະບຽບການ	ກຳໄລສະສົມຍັງບໍ່ທັນແບ່ງປັນ	
	ກີບ	ກີບ	ກີບ	ກີບ	ກີບ
ຍອດຍົກມາ					
ໃນວັນທີ 1 ມັງກອນ 2019 - ກວດສອບ	50.000.000.000	3.269.466.406	887.496.413	5.584.756.113	59.741.718.932
ຂາດທຶນໃນງວດ	-	-	-	(651.095.655)	(651.095.655)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2019- ທີ່ບໍ່ທັນຄົ້ນ	**50.000.000.000**	**3.269.466.406**	**887.496.413**	**4.933.660.458**	**59.090.623.277**
ຍອດຍົກມາ					
ໃນວັນທີ 1 ມັງກອນ 2018 - ກວດສອບ	40.000.000.000	-	826.098.998	5.032.179.374	45.858.278.372
ກຳໄລໃນງວດ	-	-	-	476.873.159	476.873.159
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2018 - ທີ່ບໍ່ທັນຄົ້ນ	**40.000.000.000**	**-**	**826.098.998**	**5.509.052.533**	**46.335.151.531**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 27 ສິງຫາ 2019

ທ່ານ ວັນສະເຫຼີມ ສີສົມຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 27 ສິງຫາ 2019

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 13 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລະຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2019

	ບິດ ອະທິບາຍ	ທີ່ຍທອນຄົນ 30 ມິຖຸນາ 2019 ກີບ	ທີ່ຍທອນຄົນ 30 ມິຖຸນາ 2018 ກີບ
ກຳໄລກ່ອນເສຍອາກອນ		**(614.998.798)**	**630.235.448**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	4	943.945.340	875.079.254
ຄ່າຕັດຮອນ	5	412.619.200	412.619.198
ຂາດທຶນຈາກການສະສາງຊັບສິນບັດຖິ່ທີ່ມີຕົວຕົນອອກ		-	75.000.000
ການສະສາງຂອງເຄື່ອງໃນສາງ		100.420.560	-
ຂາດທຶນຈາກອັດຕາແລກປ່ຽນ		682.793.855	771.335
ລາຍຈ່າຍອັດຕາດອກເບ້ຍ		53.174.387	-
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		4.281.685.406	(1.129.612.042)
ເຄື່ອງໃນສາງ. ສຸດທິ		(942.527.976)	(408.796.499)
ວັດສະດຸສະໜອງ. ສຸດທິ		(4.139.595.302)	(115.369.707)
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		(456.768.906)	(564.548.213)
ຊັບສິນໝຸນວຽນອື່ນໆ		975.803.529	(251.804.831)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(1.757.138.066)	1.340.433.670
ໜີ້ສິນໝຸນວຽນອື່ນໆ		382.120.483	(225.105.725)
ກະແສເງິນສົດຈາກກິດຈະກຳການດຳເນີນງານ, ສຸດທິ		**(78.466.288)**	**638.901.888**
ອາກອນກຳໄລທີ່ຈ່າຍ		(192.962.324)	(1.278.323.316)
ດອກເບ້ຍທີ່ຈ່າຍ		(53.174.385)	-
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(324.602.997)**	**(639.421.428)**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 27 ສິງຫາ 2019

ທ່ານ ວັນສະເຫຼີມ ສີສົມຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 27 ສິງຫາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 13 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລະຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2019

	ບິດ ອະທິບາຍ	ທີ່ຍທອນຄົນ 30 ມິຖຸນາ 2019 ກີບ	ທີ່ຍທອນຄົນ 30 ມິຖຸນາ 2018 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່		(1.243.020.837)	(1.016.768.442)
ຈ່າຍຄ່າຕົ້ນທຶນການປຸກຕົ້ນປາມ		(552.708.882)	(333.655.586)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(1.795.729.719)**	**(1.350.424.028)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	6	2.972.545.482	-
ຈ່າຍເງິນຄືນຈາກການເງິນກູ້ຢືມ	6	(1.355.822.940)	-
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້		(39.853.250)	-
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ		**1.576.869.292**	**-**
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(543.463.424)**	**(1.989.845.456)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		4.823.430.665	3.571.461.291
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		29.760.919	(22.804.891)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ		**4.309.728.160**	**1.558.810.944**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ການໄດ້ມາຂອງຊັບສົມບັດຄົງທີ່ມີຕິ໋ວຕົ໋ນ ທີ່ຍັງບໍ່ໄດ້ຊຳລະ		1.291.312.118	1.045.909.204

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 27 ສິງຫາ 2019

ທ່ານ ວັນສະເຫຼີມ ສີສັມຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 27 ສິງຫາ 2019

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 13 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້ (ທົບທວນຄືນ)
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2019

1 ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດ ມະຫາຊົນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານອັດໄຕນ້ອຍທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ນ້ຳໝາກພ້າວ ຈາກປະເທດໄທ ເພື່ອຈຳໜ່າຍ ໃນ ສປປ ລາວ.

ຮູບແບບການນຳສະເໜີ ເອກະສານລາຍງານການເງິນນີ້ແມ່ນກະທັດຮັດ ແລະ ນຳສະເໜີຕາມຄວາມຕ້ອງການ ຂອງຜູ້ບໍລິຫານ ເຊິ່ງອາດຈະບໍ່ສອດຄ່ອງກັບການປະຕິບັດຂອງສາກົນ ແລະ ບໍ່ມີການສົມທຽບກັບຂໍ້ມູນການເງິນ ຂອງປີຜ່ານມາ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ອຳນວຍການໃນວັນທີ 27 ສິງຫາ 2019.

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີ ຂອງ ບໍລິສັດ ທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2018, ນອກເໜືອນະໂຍບາຍໃໝ່ທີ່ໄດ້ລະບຸໃວ້ໃນບົດ ເອກະສານຊ້ອນທ້າຍຂໍ້ທີ 3.

ເອກະສານລາຍງານການເງິນ 6 ເດືອນຕົ້ນປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018.

ລາຍຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ທີ່ເກີດຂຶ້ນໃນຮອບໄລຍະປີການບັນຊີ ຈະຖືກປະມານການ ແລະ ບັນທຶກເປັນລາຍຈ່າຍລໍຖ້າຕັດຈ່າຍໃນເອກະສານລາຍງານການເງິນກາງປີ ກໍຕໍ່ເມື່ອລາຍຈ່າຍດັ່ງກ່າວມີຄວາມເໝາະສົມທີ່ຈະປະມານການ ຫລື ເໝາະສົມທີ່ຈະເລື່ອນການຮັບຮູ້ລາຍຈ່າຍດັ່ງກ່າວໄປບັນທຶກເມື່ອສິ້ນສຸດຮອບໄລຍະປີການບັນຊີ.

ອີງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີ ໃນສ່ວນຫຼັກຊັບພາຍໃຕ້ ສຳນັກງານ ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (LSCO) ໃນ ສປປ ລາວ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງສ້າງເອກະສານ ລາຍງານການເງິນຕາມມາດຕະຖານລາຍງານການເງິນສາກົນ (IFRS) ເຊິ່ງເປັນວິທີການບັນຊີທີ່ຮັບຮອງໂດຍທົ່ວໄປ. ປັດຈຸບັນ LSCO ຍັງຜ່ອນຜັນ ແລະ ອານຸຍາດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບປະຕິບັດຕາມນະໂຍບາຍການບັນຊີທີ່ສຳຄັນ ຂອງບໍລິສັດ ແຕ່ ສິ່ງເສີມໃຫ້ບໍລິສັດໃນຕະຫຼາດຫຼັກຊັບນຳໃຊ້ IFRS ເນື່ອງຈາກວ່າມັນຈະຖືກບັງຄັບໃຫ້ໃຊ້ໃນອະນາຄົດອັນໃກ້ນີ້. ໃນ ສປປ ລາວ, ມີ ຄວາມແຕກຕ່າງທີ່ມີສາລະສຳຄັນລະຫວ່າງບັນຊີ ຂອງບໍລິສັດ ກັບ IFRS ໃນຫຼາຍໆດ້ານເຊັ່ນ: ຊັບສົມບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ ແລະ ອາກອນລາຍໄດ້. ສະນັ້ນ, ຜູ້ໃຊ້ເອກະສານລາຍງານການເງິນຄວນເຂົ້າໃຈຄວາມແຕກຕ່າງ ແລະ ຜົນກະທົບທີ່ອາດມີຕໍ່ການຕັດສິນ ໃຈໃນການນຳໃຊ້ຂໍ້ມູນໃນເອກະສານລາຍງານການເງິນ.

2 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ໃນການສ້າງເອກະສານລາຍງານການເງິນ ໄດ້ກຳນົດອອກໂດຍຜູ້ບໍລິຫານ ເຊິ່ງຜູ້ບໍລິຫານໄດ້ສ້າງການຄາດຄະເນ ແລະ ສົມມຸດຖານຫຼາຍປະການ ເພື່ອສະແດງເຖິງຜົນກະທົບຕໍ່ມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານ ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ສ້າງເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາທີ່ໄດ້ລາຍງານ ສະນັ້ນ ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮູ້ທີ່ດີທີ່ສຸດ ຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນເບື້ອງຕົ້ນ.

ບໍລິສັດໄດ້ນຳສະເໜີຂໍ້ມູນທາງການເງິນ (ບໍ່ໄດ້ກວດສອບ) ສຳລັບສາມເດືອນສິ້ນສຸດວັນທີ 31 ທັນວາ 2018 (ໂດຍຫຍໍ້) ທີ່ລະ ບຸໃນບົດເອກະສານຊ້ອນທ້າຍຂໍ້ທີ 12 ຄືຂໍ້ມູນເພີ່ມເຕີມ. ຂໍ້ມູນເພີ່ມເຕີມດັ່ງກ່າວນີ້ແມ່ນອີງຕາມການລາຍງານ ແລະ ກົດລະບຽບກ່ຽວກັບການເປີດເຜີຍ ເລກທີ No.007/LSCO, ລົງວັນທີ 3 ເມສາ 2014, ອອກໂດຍຫ້ອງການ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງປະເທດລາວ.

3 ນະໂຍບາຍການບັນຊີທີ່ສຳຄັນໃໝ່

ນະໂຍບາຍການບັນຊີແມ່ນສອດຄ່ອງກັບນະໂຍບາຍການບັນຊີທີ່ຢູ່ໃນເອກະສານລາຍການເງິນສິ້ນສຸດວັນທີ 31 ທັນວາ 2018. ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2019, ໄດ້ມີນະໂຍບາຍການບັນຊີໃໝ່ສຳລັບສັນຍາເຊົ່າຕາມທີ່ໄດ້ອະທິບາຍຢູ່ດ້ານລຸ່ມນີ້:

ສັນຍາເຊົ່າ-ໃນກໍລະນີບໍລິສັດເປັນຄົນເຊົ່າ:

ສັນຍາເຊົ່າທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຄວາມເປັນເຈົ້າຂອງໃຫ້ແກ່ຜູ້ເຊົ່າຖືເປັນສັນຍາເຊົ່າດຳເນີນງານ. ລາຍຈ່າຍພາຍໃຕ້ສັນຍາເຊົ່າດຳເນີນງານ (ສຸດທິຈາກສິ່ງຕອບແທນທີ່ໄດ້ຈະຮັບຈາກຜູ້ໃຫ້ເຊົ່າ)ຈະໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບສະເໜີຕົວຕະຫຼອດອາຍຸຂອງສັນຍາເຊົ່າ.

ເມື່ອສັນຍາຄ່າເຊົ່າຖືກຍົກເລີກກ່ອນໄລຍະເວລາທີ່ກຳນົດ, ການຊຳລະເງິນໃຫ້ຜູ້ໃຫ້ເຊົ່າຕ້ອງຊຳລະນັ້ນແມ່ນຈະຕ້ອງໄດ້ຮັບຮູ້ເປັນຄ່າປັບໃໝທີ່ເປັນຄ່າໃຊ້ຈ່າຍໃນງວດເມື່ອມີການຍົກເລີກສັນຍາ.

ສັນຍາເຊົ່າຊັບສົມບັດຖາວອນທີ່ມີຕົວຕົນ ເຊິ່ງໄດ້ມີການເຊັນສັນຍາເຊົ່າກັບບໍລິສັດໃຫ້ເຊົ່າສິນເຊື່ອ ຈະຈັດເປັນປະເພດສັນຍາເຊົ່າທາງການເງິນ. ຄ່າໃຊ້ຈ່າຍຕ່າງໆຂອງຊັບສົມບັດຖາວອນທີ່ມີຕົວຕົນແມ່ນສອດຄ່ອງໃນການຈັດຊື້, ແລະ ຄ່າຕິດຕັ້ງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆທີ່ກ່ຽວກັບຊັບສົມບັດຖາວອນທີ່ມີຕົວຕົນ. ໜີ້ຕ້ອງສົ່ງຂອງການເຊົ່າຊື້ແມ່ນລວມມີຕົ້ນທຶນຂອງຊັບສົມບັດຖາວອນ ແລະ ດອກເບ້ຍຕ້ອງຈ່າຍລ່ວງໜ້າ ຕັດຈ່າຍ. ດອກເບ້ຍຕ້ອງຈ່າຍລ່ວງໜ້າ ຕັດຈ່າຍແມ່ນຈະບັນທຶກເປັນຊັບສິນອື່ນໆ ແລະ ຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບແບບສະເໜີຕົວຕະຫຼອດອາຍຸຂອງສັນຍາເຊົ່າ.

4 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2019	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**20.280.020.977**
ເພີ່ມຂຶ້ນ	3.716.060.876
ສະສາງ	-
ຄ່າຫຼ້ຍຫ້ຽນ	(943.945.340)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2019 - ທີ່ບ ທອນຄືນ	**23.052.136.513**

ການເພີ່ມຂຶ້ນຂອງຊັບສິນຄົງທີ່ມີຕົວຕົນໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2019 ສ່ວນຫຼາຍສະແດງເຖິງລົດບັນທຸກ 5 ຄັນ.

5 ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2019	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**22.507.458.490**
ເພີ່ມຂຶ້ນ	552.708.883
ຫັກ: ຄ່າຕັດຮອນ	(412.619.200)
ຍອດເຫຼືອທ້າຍ - ທີ່ບທອນຄືນ	**22.647.548.173**
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	24.339.954.977
ຫັກ: ຄ່າຕັດຮອນສະສົມ	(1.692.406.804)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2019 - ທີ່ບ ທອນຄືນ	**22.647.548.173**

ໃນວັນທີ 30 ມິຖຸນາ 2019, ມີສວນປາມທີ່ພ້ອມຈະເກັບກ່ຽວ 3 ສວນ ເຊິ່ງມີຕົ້ນທຶນການປູກເຍື່ອນລໍຖ້າຕັດມູນຄ່າ 20.798.314.479 ກີບ ແລະ ໄດ້ຕັດຮອນ ແລະ ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ ສຳລັບ 6 ເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2019 ມູນຄ່າ 412.619.200 ກີບ.

6 ເງິນກູ້ຢືມໄລຍະສັ້ນ

	LAK
ຍອດຍົກມາ ສຸດທ ໃນວັນທ 1 ມັງກອນ - ກວດສອບ	**426.674.639**
ເພີ່ມຂຶ້ນ	2.972.545.482
ຈ່າຍຄືນ	(1.355.822.940)
ຍອດເຫຼືອທ້າຍງວດ ສຸດທ ໃນວັນທ 30 ມິຖຸນາ 2019 - ທີ່ບທວນຄືນ	**2.043.397.181**

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທ 30 ມິຖຸນາ 2019, ບໍລິສັດໄດ້ຖອນເງິນກູ້ໄລຍະສັ້ນເພີ່ມເຕີມຈາກທະນາຄານລາວຫວຽດ ມູນຄ່າ 2.972.545.482 ກີບ ແລະ ໄດ້ມີການຈ່າຍເງິນຕົ້ນຄືນໃຫ້ແກ່ທະນາຄານມູນຄ່າ 1.355.822.940 ກີບ.

7 ໜີ້ຕ້ອງສົ່ງຈາກການເຊົ້າຊື້

	ທີ່ບທວນຄືນ 30 ມິຖຸນາ 2018 ກີບ
ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	570.347.823
ບໍ່ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້	1.663.515.034
	2.233.862.857

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທ 30 ມິຖຸນາ 2019, ບໍລິສັດໄດ້ເຊັນສັນຍາເຊົ່າຊື້ລົດບັນທຸກກັບບໍລິສັດ ວິນອໍໂຕ ຊັບພາຍ ຈຳກັດ ຈຳນວນ 5 ຄັນ ມູນຄ່າທັງໝົດ 11.500.000 ບາດ ຫຼືເທົ່າກັບ 3.069.235.000 ກີບ. ຊຳລະງວດທ 1 ມູນຄ່າ 4.600.000 ບາດ ຫຼືເທົ່າກັບ 1.227.694.000 ກີບ ແລະ ມູນຄ່າຄົງເຫຼືອ ແມ່ນ 6.900.000 ບາດ, ເຊິ່ງມີອັດຕາດອກເບ້ຍ 3.75% ຕໍ່ປີ ເປັນ ເວລາ 4 ປີ. ນອກຈາກນີ້, ບໍລິສັດໄດ້ຊຳລະເງິນຕົ້ນງວດທ 1 ມູນຄ່າ 143.750 ບາດ ຫຼື ເທົ່າກັບ 39.853.250 ກີບ ແລະ ຊຳລະ ດອກເບ້ຍມູນຄ່າ 21.562 ຫຼືເທົ່າກັບ 39.853.250 ກີບ.

8 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນກຳໄລ ໃນອັດຕາ 24% ຂອງກຳໄລທາງອາກອນ. ນອກຈາກນີ້, ບໍລິສັດຈົດທະບຽນໃນຕະຫລາດຫຼັກຊັບລາວ ເຊິ່ງອີງຕາມລະບຽບຂອງ ຕະຫຼາດຫຼັກຊັບ ບໍລິສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີນັບຈາກປີທີ່ບໍລິສັດໄດ້ ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງສປປລາວ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ຊຶ່ງມັນບໍ່ ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດສານ. ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໃໝ ແລະ ລົງໂທດ.

8 ອາກອນກຳໄລ (ຕໍ່)

ປັດໃຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າ ໄດ້ຈັດກຽມຢ່າງພຽງພໍສຳລັບໜີ້ຕ້ອງສົ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ໃນລະຫວ່າງການປີ ສິ້ນສຸດວັນທີ 30 ມິຖຸນາ 2019, ບໍລິສັດໄດ້ຮັບຮູ້ອາກອນລາຍຮັບໃນໃບລາຍງານຜົນໄດ້ຮັບ ມູນຄ່າ 36.096.857 ກີບ.

9 ກຳໄລຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງກຳໄລຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາທ່ວງນ້ຳໜັກສະເລ່ຍຂອງ ຈຳນວນຮຸ້ນສາມັນ

	ສຳລັບ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2019	ສຳລັບ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2018
ກຳໄລສຳລັບຜູ້ຖືຮຸ້ນສາມັນ (ກີບ)	**(651.095.655)**	**476.873.159**
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	87.500.000	51.500.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(7)	9

10 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມຫົວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍ ຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງໃນໄລຍະ 6 ເດືອນຕົ້ນປີ:

10 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

10.1 ການຊື້ສິນຄ້າ

	ທົບທວນຄືນ 30 ມິຖຸນາ 2019 ກີບ	ທົບທວນຄືນ 30 ມິຖຸນາ 2018 ກີບ
ຊື້ສິນຄ້າ ແລະ ລາຍການອື່ນໆກັບພາກສ່ວນທີ່ກ່ຽວຂ້ອງ		
- ບໍລິສັດ OPG Tech (ປະເທດໄທ)	1.673.029.502	2.331.774.824
	1.673.029.502	**2.331.774.824**

ລາຍການເຄື່ອນໄຫວຂ້າງເທິງສ່ວນໃຫຍ່ແມ່ນສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ນ້ຳໝາກພ້າວ ນຳເຂົ້າຈາກ ບໍລິສັດ OPG Tech (ປະເທດໄທ) ເພື່ອຈຳໜ່າຍໃນ ສປປ ລາວ ໂດຍ ບໍລິສັດ.

10.2 ຍອດເຫຼືອຈາກການຊື້ ແລະ ການຂາຍສິນຄ້າ ແລະ ລາຍການອື່ນໆ

	ທົບທວນຄືນ 30 ມິຖຸນາ 2019 ກີບ	ກວດສອບ 31 ທັນວາ 2018 ກີບ
ໜີ້ຕ້ອງສົ່ງໃຫ້:		
ພາກສ່ວນທີ່ກ່ຽວຂ້ອງ – OPG Tech	5.291.898.297	8.690.429.452
	5.291.898.297	**8.690.429.452**

ໃນວັນທີ 30 ມິຖຸນາ 2019, ໜີ້ຕ້ອງສົ່ງກັບພາກສ່ວນທີ່ກ່ຽວຂ້ອງ ສ່ວນໃຫຍ່ໝາຍເຖິງ ຍອດຄ້າງຊຳລະຈາກການຊື້ສິນຄ້າ ເຊັ່ນນ້ຳມັນປາມດິບ ນຳເຂົ້າຈາກ ບໍລິສັດ OPG Tech (ປະເທດໄທ) ເພື່ອຜະລິດນ້ຳມັນ bio-diesel ໃນ ສປປ ລາວ ໂດຍ ບໍລິສັດ ລວມເຖິງ ຍອດຄ້າງຈ່າຍສຳລັບຊື້ສິນຄ້າສຳເລັດຮູບອື່ນໆ ແລະ ຊັບສົມບັດຄົງທີ່ຈາກ ບໍລິສັດ OPG Tech (ປະເທດ ໄທ) ໃນປີຜ່ານມາ.

11 ພາລະຜູກພັນ

ໃນວັນທີ 30 ມິຖຸນາ 2019, ບໍລິສັດ ບໍ່ໄດ້ມີພາລະຜູກພັນສັນຍາເຊົ່າເພື່ອດຳເນີນງານທີ່ສຳຄັນເພີ່ມເຕີມ.

12 ຂໍ້ມູນເພີ່ມເຕີມ

ບໍລິສັດໄດ້ນຳສະເໜີໃບລາຍງານຜົນໄດ້ຮັບທີ່ບໍ່ໄດ້ກວດສອບສຳລັບໄລຍະເວລາສາມເດືອນສິ້ນສຸດວັນທີ 30 ມິຖຸນາ 2019 ພາຍໃຕ້ ບົດອະທິບາຍຊ້ອນທ້າຍນີ້. ນີ້ແມ່ນສອດຄ່ອງກັບກົດລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍສຳນັກງານຄະນະກຳມະ ການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ບົດອະທິບາຍທີ 2).

12 ຂໍ້ມູນເພີ່ມເຕີມ (ຕໍ່)

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະເວລາສາມເດືອນເລີ່ມແຕ່ວັນທີ 1 ເມສາ ເຖິງ 30 ມິຖຸນາ 2019

	(ບໍ່ໄດ້ກວດສອບ) ສຳລັບໄລຍະເວລາສາມເດືອນເລີ່ມແຕ່ວັນທີ 1 ເມສາ ເຖິງ 30 ມິຖຸນາ 2019 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ	20.710.881.053
ຕົ້ນທຶນໃນການຂາຍ ແລະ ການບໍລິການ	(18.166.843.971)
ກຳໄລ ຂັ້ນຕົ້ນ	**2.544.037.082**
ລາຍຈ່າຍການຂາຍ ແລະ ບໍລິຫານ	(1.908.623.004)
ລາຍຮັບອື່ນໆ	105.961.778
ຂາດທຶນຈາກອັດຕາແລກປ່ຽນ	(1.088.055.996)
ຂາດທຶນຈາກການດຳເນີນງານ	(346.680.140)
ລາຍຈ່າຍທາງການເງິນ	(53.174.387)
ຂາດທຶນຈາກການດຳເນີນງານກ່ອນອາກອນກຳໄລ	**(399.854.527)**
ອາກອນກຳໄລ	(36.096.857)
ຂາດທຶນສຸດທິສຳລັບທ້າຍງວດ	**(435.951.384)**